# ພວກເຮົາເດີນຕາມເສັ້ນທາງແຫ່ງຄວາມສຸກ

ວັນທີ 3 ທັນວານີ້, ທາງລົດໄຟ ລາວ-ຈີນ ໄດ້ເປີດນຳໃຊ້ຄົບຮອບ 3 ປີ. 3 ປີຜ່ານມາ, ປະຊາຊົນທັງສອງປະເທດໄດ້ຮັບຜົນປະໂຫຍດຈາກທາງລົດໄຟທີ່ເປັນເສັ້ນທາງແຫ່ງຄວາມສຸກ, ເສັ້ນທາງແຫ່ງການພັດທະນາ ແລະ ເສັ້ນທາງມິດຕະພາບ ສາຍນີ້ ຈົນນັບບໍ່ຖ້ວນ. ໃນສາຍຕາຂອງພວກເຂົາເຈົ້າ, ທາງລົດໄຟ ລາວ-ຈີນ ໄດ້ນຳເອົາຫຍັງແດ່ມາໃຫ້ແກ່ພວກເຂົາເຈົ້າ?



## "ເສັ້ນທາງແຫ່ງຄວາມສຸກ" ທີ່ເຊື່ອມຕໍ່ກັນ

ທ່ານ ປອງດອງ ປະຊາພັກດີ ກົງສຸນໃຫຍ່ ສປປ ລາວ ປະຈຳນະຄອນຄຸນໝິງ ແຂວງຢຸນນານ ສປ ຈີນ ກ່າວວ່າ: "ປີນີ້, ຂ້າພະເຈົ້າໄດ້ຂີ່ຂະບວນລົດໄຟຕາມທາງລົດໄຟ ລາວ-ຈີນ ມາຄຸນໝິງ ເພື່ອປະຕິບັດໜ້າຕາມການມອບໝາຍໃຫ້ດຳລົງຕຳແໜ່ງ ເປັນກົງສຸນໃຫຍ່. ພາບວິວທິວທັດຕາມທາງງາມຫຼາຍ, ຂະບວນລົດໄຟໄດ້ແລ່ນຕາມທາງຢ່າງປອດໄພ ແລະ ສະດວກສະບາຍທີ່ສຸດ. ຂ້າພະເຈົ້າ ຍັງໄດ້ອ່ານວາລະສານ "ຈຳປາ" ຢູ່ຕາມຂະບວນລົດໄຟ ເຊິ່ງໄດ້ອ່ານຫຼາຍເລື່ອງລາວທີ່ກ່ຽວກັບມິດຕະພາບ ຄວາມຮັກແພງ ລະຫວ່າງ ລາວ-ຈີນ." ທ່ານ ກ່າວຕື່ມວ່າ, ທາງລົດໄຟ ລາວ-ຈີນ ໄດ້ຕອບສະໜອງຄວາມປາຖະໜາຂອງປະຊາຊົນສອງຊາດ ແລະ ຊ່ວຍປະເທດລາວ ໄດ້ບັນລຸຄວາມຝັນຈາກ "ປະເທດທີ່ບໍ່ມີທາງຕິດກັບທະເລ" ມາເປັນ "ປະເທດທີ່ເຊື່ອມໂຍງເຊື່ອມຈອດຂອງພາກພື້ນ".

ປີ 2022, ທ່ານ ກະຕ່າຍ ມາກໂນຊາ ໂຄສົກຂ່າວຂອງວິທະຍຸກະຈາຍສຽງແຫ່ງຊາດລາວ ໄດ້ເຂົ້າຮ່ວມກິດຈະກຳເກັບກຳຂ່າວ ຕາມເສັ້ນທາງລົດໄຟ ລາວ-ຈີນ ພາຍໃຕ້ຫົວຂໍ້ "ຄວາມຮັກແພງ ລະຫວ່າງລາວ-ຈີນ ເສັ້ນທາງແຫ່ງຄວາມສຸກ", ເດີນທາງຈາກນະຄອນຫຼວງວຽງຈັນໄປເຖິງດ່ານບໍ່ເຕ່ນ, ລົງໄປເກັບກຳຂ່າວຢູ່ຕາມໂຄງການສັນຍະລັກ, ສະຖານີຂົນຖ່າຍສິນຄ້າ, ຊັບພະຍາກອນການທ່ອງທ່ຽວວັດທະນະທຳ ແລະ ສະພາບການພັດທະນາຊົນນະບົດຢູ່ລຽບຕາມເສັ້ນທາງລົດໄຟ.

ທ່ານ ກະຕ່າຍ ມາກໂນຊາ ກ່າວອຸທານວ່າ: "ປະສົບການເກັບກຳຂ່າວເທື່ອນັ້ນ ໄດ້ສ້າງພາບປະທັບໃຈອັນເລິກເຊິ່ງແກ່ຂ້າພະເຈົ້າ, ພວກເຮົາໄດ້ເປັນສັກຂີພິຍານໃຫ້ແກ່ຄຳເວົ້າທີ່ວ່າ: "ທາງລົດໄຟສ້າງໄປເຖິງບ່ອນໃດ, ກໍມີການພັດທະນາໄປເຖິງບ່ອນນັ້ນ. ເຖິງຈະເປັນບ້ານທີ່ຢູ່ເຂດຫ່າງໄກສອກຫຼີກກໍຕາມ, ແຕ່ຖ້າທາງລົດໄຟແລ່ນຜ່ານແຫ່ງນັ້ນ, ຊີວິດການເປັນຢູ່ຂອງຊາວບ້ານ ກໍເກີດມີການປ່ຽນແປງແບບໜ້າມືເປັນຫຼັງມື."

ທ່ານ ວາງເຈິ້ນ ຜູ້ນຳທ່ຽວລາວ ປີນີ້ ອາຍຸ 31 ປີ ກ່າວດ້ວຍຄວາມຈິງໃຈວ່າ: "ການເປີດນຳໃຊ້ທາງລົດໄຟ ລາວ-ຈີນ ບໍ່ພຽງແຕ່ ໄດ້ດຶງດູດນັກທ່ອງທ່ຽວມາທ່ຽວຫຼາຍກວ່າເກົ່າເທົ່ານັ້ນ, ແຕ່ຫາກຍັງໄດ້ຊຸກຍູ້ໃຫ້ຍົກລະດັບການບໍລິການຂອງຂະແໜງການທ່ອງທ່ຽວຂອງລາວ ໃຫ້ດີຂຶ້ນອີກດ້ວຍ, ເຮັດໃຫ້ຄົນທັງຫຼາຍ ໄດ້ຮັບຜົນປະໂຫຍດຈາກຂະແໜງການທ່ອງທ່ຽວນັບມື້ນັບຫຼາຍຂຶ້ນ." ນັບແຕ່ທ່ານ ວາງເຈິ່ນ ເປັນຜູ້ນຳທ່ຽວ 7 ປີມານີ້, ທ່ານ ໄດ້ກາຍເປັນໜຶ່ງໃນຜູ້ນຳທ່ຽວທີ່ໄດ້ຮັບຄວາມນິຍົມຈາກນັກທ່ອງທ່ຽວທີ່ສຸດ ຍ້ອນທ່ານໄດ້ທັງພາສາຈີນ ແລະ ພາສາອັງກິດ.

ທ່ານ ຄຳພັນ ຊະນະເລີດ ໄດ້ແບ່ງປັນຄວາມເຫັນຂອງຕົນດ້ວຍຄວາມຕື່ນເຕັ້ນດີໃຈວ່າ: "ພາຍຫຼັງເປີດນຳໃຊ້ທາງລົດໄຟ ລາວ-ຈີນ ແລ້ວ, ໄດ້ປະຢັດເວລາໃນການຂົນສົ່ງສິນຄ້າ, ຕົ້ນທຶນການຂົນສົ່ງ ກໍໄດ້ຫຼຸດລົງ ເຊິ່ງໄດ້ດຶງດູດນັກທຸລະກິດມາລົງທຶນຂະແໜງການກະສິກຳຢູ່ລາວ ນັບມື້ນັບຫຼາຍຂຶ້ນ, ໄດ້ນຳເອົາເຕັກນິກການປູກຝັງ ແລະ ປະສົບການຄຸ້ມຄອງທີ່ທັນສະໄໝ ເຂົ້າມາປະເທດລາວ ອີກດ້ວຍ." ທ່ານ ກ່າວຕື່ມວ່າ: ປີກາຍນີ້, ຄອບຄົວຕົນປູກມັນຕົ້ນໄດ້ 40 ໂຕນ ແລະ ຂາຍໄດ້ລາຄາດີ. ປີນີ້, ທ່ານ ແລະ ຄອບຄົວ ຕົກລົງຈະຂະຫຍາຍເນື້ອທີ່ປູກມັນຕົ້ນເພີ່ມຂຶ້ນ.

ທ່ານ ພົງປະເສີດ ປັນຍາສະຫວາດ ອະດີດຮອງຫົວໜ້າພະແນກກະສິກຳ-ປ່າໄມ້ ແຂວງອຸດົມໄຊ ກ່າວວ່າ: "ທາງລົດໄຟ ລາວ-ຈີນ ໄດ້ອຳນວຍຄວາມສະດວກເປັນພິເສດ ໃຫ້ແກ່ການນຳເຂົ້າ ແລະ ສົ່ງອອກສິນຄ້າ ຂອງແຂວງອຸດົມໄຊ, ປະຊາຊົນ ແຂວງອຸດົມໄຊ ມັກປູກພືດປະເພດສົ່ງອອກຂາຍເປັນສິນຄ້າ, ສ່ວນນັກທຸລະກິດແຂວງອຸດົມໄຊ ແລະ ນັກທຸລະກິດ ຕ່າງປະເທດ ກໍມັກສ້າງເຂດນິຄົມກະສິກຳ ເພື່ອຍົກປະສິດທິພາບດ້ານການປູກ ເພື່ອເພີ່ມຜະລິດຕະພັນກະສິກຳໃຫ້ສູງຂຶ້ນ."

## "ເສັ້ນທາງ ແຫ່ງຄວາມຈະເລີນ" ທີ່ສ້າງຜົນປະໂຫຍດເຊິ່ງກັນແລະກັນ

ຢູ່ໃນສູນໃຈກາງນະຄອນຄຸນໝິງ ຂອງບໍລິສັດຕູ້ຄອນເທນເນີທາງລົດໄຟຈີນ ກຳກັດ, ລົດໃຫຍ່ໄດ້ແລ່ນໄປໆມາໆ, ເຄື່ອງຈັກດັງຫຶບໆ, ເຄື່ອງຈັກຍົກໄດ້ຍົກຕູ້ຄອນເທນເນີຈາກລົດໄຟຢູ່ຕະຫຼອດເວລາ, ການຈັດສັນ, ການຍົກ ແລະ ການແຈກຕູ້ຄອນເທນເນີ ໄດ້ດຳເນີນໄປຢ່າງເປັນລະບຽບຮຽບຮ້ອຍ.

ຢູ່ສະຖານີວຽງຈັນໃຕ້ຂອງປະເທດລາວ ທີ່ໄກຈາກນະຄອນຄຸນໝິງ 1.000 ກວ່າກິໂລແມັດ, ຜົນຜະລິດເຂດຮ້ອນຂອງອາຊີຕາເວັນອອກສ່ຽງໃຕ້ ພວມຖືກຂົນຖ່າຍເຂົ້າໃນຕູ້ລົດໄຟ ຢ່າງບໍ່ຂາດສາຍ.

ນັບແຕ່ໄດ້ເປີດນຳໃຊ້ເປັນເວລາ 3 ປີມານີ້, ຈຳນວນສິນຄ້າທີ່ຂົນສົ່ງຕາມທາງລົດໄຟ ລາວ-ຈີນ ໄດ້ເພີ່ມຂຶ້ນເປັນ 3.000 ກວ່າຊະນິດ. ໝາກມັງຄຸດ, ໝາກຖົ່ວລຽນ, ມັນຕົ້ນ, ໝາກມ່ວງ ແລະ ໝາກໄມ້ອື່ນໆ ຈາກລາວ ແລະ ຫຼາຍປະເທດອາຊີຕາເວັນອອກສ່ຽງໃຕ້ ຖືກສົ່ງເຂົ້າຕະຫຼາດຈີນ, ຜະລິດຕະພັນຈີນ ກໍໄດ້ສົ່ງໄປເຖິງຕະຫຼາດລາວ ແລະ ຫຼາຍປະເທດອາຊີຕາເວັນອອກສ່ຽງໃຕ້. ປີ 2023, ຍອດມູນຄ່າການຄ້າລະຫວ່າງ ຈີນ-ລາວ ໄດ້ມີເຖິງ 7,1 ຕື້ໂດລາ, ເພີ່ມຂຶ້ນ 26,7% ເມື່ອທຽບໃສ່ປີ 2022.

ທ່ານ ຫຼົວຢຸນຊາວ (Luo Yunchao) ເຈົ້າຂອງຮ້ານຂາຍເບຍຄຸນນະພາບດີຢູ່ຄຸ້ມໝານລົວກູຊຽງ ນະຄອນຫຼວງປັກກິ່ງ ກ່າວວ່າ: "ເດືອນມິຖຸນາປີກາຍ, ຂ້າພະເຈົ້າໄດ້ຂາຍເບຍລາວ ເປັນຄັ້ງທຳອິດ, ໄດ້ຮັບຄວາມນິຍົມຊົມຊອບຈາກລູກຄ້າຫຼາຍ. ເບຍຊະນິດນີ້ ມີລົດຊາດສົດຊື່ນ, ມີກິ່ນຫອມໝາກໄມ້, ສິ່ງທີ່ສຳຄັນກວ່ານັ້ນ ກໍຄືມັນລາຄາອ່າວຖືກ, ປ໋ອງໜຶ່ງມີແຕ່ 10 ຢວນເທົ່ານັ້ນ." ທ່ານ ກ່າວຕື່ມວ່າ: ໃນຊຸມປີຜ່ານມາ, ລູກຄ້າຈີນ ໄດ້ເລືອກຊື້ເບຍລາວນັບມື້ນັບຫຼາຍຂຶ້ນ.

ວັນທີ 17 ພະຈິກຜ່ານມາ, ໝາກກ້ວຍລາວ ທີ່ສຸກເຫຼືອງດີໃນຮ້ານຊັບພະສິນຄ້າຈິ່ງເຄົ໋ລົງ ເຂດສາວຢາງ ນະຄອນຫຼວງປັກກິ່ງ ໄດ້ດຶງດູດຄວາມສົນໃຈຂອງລູກຄ້າຫຼາຍ. ທ່ານ ຈ່າງຈຸ່ງຢີ້ (Zhang Zhongyi) ຜູ້ອຳນວຍການໃຫຍ່ບໍລິສັດຜະລິດຕະພັນໝາກໄມ້ ຢິງຊິນເຫິງຊາງ ປັກກິ່ງ ກ່າວວ່າ: ໝາກກ້ວຍເຫຼົ່ານີ້ເປັນໝາກກ້ວຍອາຊີຕາເວັນອອກສ່ຽງໃຕ້ຊຸດທຳອິດ ທີ່ຖືກຂົນສົ່ງເຖິງນະຄອນຫຼວງປັກກິ່ງດ້ວຍຂະບວນລົດໄຟແຊ່ເຢັນສາກົນ "ສາຍປັກກິ່ງ-ຢຸນນານ · ລ້ານຊ້າງ-ແມ່ຂອງ" ຕາມທາງລົດໄຟລາວ-ຈີນ.

ທ່ານ ຈ້າວແຢ້ນເຟີງ (Zhao Yanfeng) ຫົວໜ້າພະແນກຂົນສົ່ງສິນຄ້າ ບໍລິສັດທາງລົດໄຟແຫ່ງຊາດຈີນ ສາຂາຄຸນໝິງກ່າວວ່າ: "ທາງລົດໄຟ ລາວ-ຈີນ ໄດ້ເຊື່ອມຕໍ່ກັບເຄືອຂ່າຍທາງລົດໄຟຈີນ ຢູ່ສົ້ນເໜືອ, ຍັງສາມາດເຊື່ອມຕໍ່ກັບຣັດເຊຍ ໂດຍຜ່ານຂະບວນລົດໄຟ ຈີນ-ເອີຣົບ, ໄກສຸດສາມາດເດີນທາງໄປເຖິງເຢຍລະມັນ ແລະ ແອັສປາຍ; ສົ້ນໃຕ້ເຊື່ອມຕໍ່ກັບທາງລົດໄຟພາຍໃນປະເທດໄທ, ໄປເຖິງທ່າກຳປັ່ນພາກໃຕ້, ຈີນເຖິງກຳປູເຈຍ, ມາເລເຊຍ ແລະ ສິງກະໂປ." ທ່ານກ່າວຕື່ມວ່າ: 3 ປີຜ່ານມາ, ເວລາ ແລະ ຕົ້ນທຶນການຂົນສົ່ງສິນຄ້າ ໄດ້ຫຼຸດລົງຢ່າງຫຼວງຫຼາຍ ເຊິ່ງໄດ້ຊຸກຍູ້ການພັດທະນາອຸດສາຫະກຳການຜະລິດຢູ່ລຽບຕາມເສັ້ນທາງລົດໄຟຢ່າງແຂງແຮງ.

## ເນື້ອໃນເພີ່ມເຕີມ:

ພາຍໃຕ້ການຊຸກຍູ້ຂອງທາງລົດໄຟ ລາວ-ຈີນ, ຫົກເດືອນຕົ້ນປີນີ້, ຍອດມູນຄ່າການຄ້າ ລະຫວ່າງ ຈີນກັບ 5 ປະເທດ ຕາມລ້ອງແມ່ນ້ຳຂອງ ໄດ້ມີຫຼາຍກວ່າ 200 ຕື້ໂດລາ.

(ສະໜອງຂໍ້ມູນໂດຍ: ສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສ່ຽງໃຕ້ ແຂວງຢຸນນານ)

yznhanba@163.com
laos.yunnangateway.com